Notice of potential expulsion - serious behaviour/s of concern

Using the telephone interpreter service to contact the school

# ການແຈ້ງເຖິງຄວາມເປັນໄປໄດ້ໃນການຖືກໄລ່ອອກຈາກໂຮງຮຽນ - ຄວາມປະພຶດຮ້າຍແຮງທີ່ໜ້າກັງວົນ

## ໃຊ້ບໍລິການນາຍພາສາທາງໂທລະສັບເພື່ອຕິດຕໍ່ໂຮງຮຽນ

ຊື່ນັກຮຽນ
Name of student

ຊື່ພໍ່ແມ່/ຜູ້ດູແລ ທີ່ຮັກແພງ

ຈົດໝາຍທີ່ຕິດຄັດມານີ້ອະທິບາຍລາຍລະອຽດຂອງການແຈ້ງເຖິງຄວາມເປັນໄປໄດ້ໃນການຖືກໄລ່ອອກຈາກໂຮງຮຽນ - ຄວາມປະພຶດຮ້າຍແຮງທີ່ໜ້າກັງວົນ ທີ່ຂ້າພະເຈົ້າໄດ້ອອກໃຫ້ລູກຂອງທ່ານໂດຍສອດຄ່ອງກັບນະໂຍບາຍຄວາມປະພຶດນັກຮຽນຂອງກະຊວງສຶກສາຂອງລັດ NSW ແລະ ຂັ້ນຕອນການສັ່ງພັກຮຽນ ແລະ ການໄລ່ອອກ.

ຈົດໝາຍນີ້ເຊີນທ່ານເຂົ້າຮ່ວມກອງປະຊຸມຢ່າງເປັນທາງການເພື່ອປຶກສາຫາລືກ່ຽວກັບເລື່ອງນີ້ ກ່ອນທີ່ຈະມີການຕັດສິນໃຈທີ່ຈະໄລ່ອອກ. ເມື່ອທາງໂຮງຮຽນຕິດຕໍ່ໄປຫາທ່ານ ກະລຸນາແຈ້ງໃຫ້ພວກເຮົາຊາບວ່າທ່ານຕ້ອງການນາຍພາສາຢູ່ໃນກອງປະຊຸມ ແລະພວກເຮົາຈະຈັດໃຫ້. ຖ້າຫາກທ່ານມີຄວາມຫຍຸ້ງຍາກໃນການເຂົ້າໃຈຈົດໝາຍທີ່ຄັດຕິດມານີ້, ກະລຸນາຕິດຕໍ່ຫາໂຮງຮຽນເພື່ອໃຫ້ພວກເຮົາອະທິບາຍໄດ້.

ທ່ານໄດ້ຖືກຮ້ອງຂໍໃຫ້ຕອບກັບເມື່ອໄດ້ຮັບການແຈ້ງເຖິງຄວາມເປັນໄປໄດ້ໃນການຖືກໄລ່ອອກຈາກໂຮງຮຽນ - ຄວາມປະພຶດຮ້າຍແຮງທີ່ໜ້າກັງວົນ. ແບບຟອມແຍກຕ່າງຫາກແມ່ນແນບຕິດມາເພື່ອຈຸດປະສົງນີ້. ເອກະສານຄັດຕິດມາຍັງມີຂໍ້ມູນກ່ຽວກັບສິ່ງທີ່ທ່ານຕ້ອງການຮູ້ຖ້າລູກຂອງທ່ານຖືກໄລ່ອອກຈາກໂຮງຮຽນ.

ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອຈາກນາຍພາສາໃນເວລາຕິດຕໍ່ໂຮງຮຽນ, ກະລຸນາໂທຫາ ເບີ 131 450 ແລະຂໍເອົານາຍພາສາທີ່ປາກພາສາຂອງທ່ານ. ບອກຜູ້ຮັບສາຍເບີໂທລະສັບທີ່ທ່ານຕ້ອງການໂທຫາ ແລະ ພວກເຂົາຈະຫານາຍພາສາໃນສາຍເພື່ອຊ່ວຍໃນການສົນທະນາຂອງທ່ານ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.

ຊື່ຂອງທ່ານຄູໃຫຍ່
Name of Principal

ເບີໂທລະສັບຂອງທ່ານຄູໃຫຍ່
Principal’s phone number

## ການແຈ້ງເຖິງຄວາມເປັນໄປໄດ້ໃນການຖືກໄລ່ອອກຈາກໂຮງຮຽນ - ຄວາມປະພຶດຮ້າຍແຮງທີ່ໜ້າກັງວົນ - ການຕອບສະ ໜອງຂອງພໍ່ແມ່ / ຜູ້ດູແລ

## Notice of potential expulsion -serious behaviour/s of concern - Parent/carer response

**ກະລຸນາສົ່ງແບບຟອມນີ້ໄປທີ່ທີ່ຢູ່ອີເມວທີ່ລະບຸໄວ້ຂ້າງລຸ່ມນີ້ ຫຼື ໄປຫາຫ້ອງການໂຮງຮຽນ**

ຊື່ນັກຮຽນ
Name of student ______________________________

ທີ່ຢູ່ອີເມວຂອງໂຮງຮຽນສຳລັບການສົ່ງຄຳຕອບຄືນ
School email address for return of response ______________________________

**ພໍ່ແມ່/ຜູ້ດູແລ ຈົ່ງໃຫ້ລາຍລະອຽດຂ້າງລຸ່ມນີ້ເປັນພາສາອັງກິດ**

- ☐ ຂ້ອຍໄດ້ສົນທະນາເລື່ອງນີ້ກັບລູກຂອງຂ້ອຍ ແລະໄດ້ຮັບຮູ້ການແຈ້ງເຖິງຄວາມເປັນໄປໄດ້ໃນການຖືກໄລ່ອອກຈາກໂຮງຮຽນເນື່ອງຈາກຄວາມປະພຶດຮ້າຍແຮງທີ່ໜ້າກັງວົນ
  I have discussed this matter with my child and have noted the notice of potential expulsion for serious behaviour/s of concern.
- ☐ ຂ້ອຍຈະມາພົບກັບໂຮງຮຽນໄວເທົ່າທີ່ຈະໄວໄດ້ເພື່ອປຶກສາຫາລືກ່ຽວກັບເລື່ອງນີ້.
  I will meet with the school as soon as possible to discuss this matter.
- ☐ ທີ່ເປັນທາງເລືອກ - ຂ້ອຍຈະເອົາຄົນສະໜັບສະໜູນເພື່ອເຂົ້າຮ່ວມກອງປະຊຸມກັບຂ້ອຍນຳ.
  Optional - I will bring a support person to attend the meeting with me.
- ☐ ທີ່ເປັນທາງເລືອກ - ຂ້ອຍຈະຕ້ອງການນາຍພາສາຢູ່ໃນກອງປະຊຸມ.
  Optional - I will need an interpreter at the meeting.

ຊື່ຂອງພໍ່ແມ່/ຜູ້ດູແລ (ກະລຸນາຂຽນໂຕພິມ) ______________________________
Name of parent/carer

ລາຍເຊັນຂອງ ພໍ່ແມ່/ຜູ້ດູແລ ______________________________ ວັນທີ ______________
Signature of parent/carer | Date

ພໍ່ແມ່/ຜູ້ດູແລໃຫ້ລາຍລະອຽດຂອງວິທີການຕິດຕໍ່ທີ່ຕ້ອງການ ເຊັ່ນ:. ເບີໂທລະສັບ, ທີ່ຢູ່ອີເມວ

ວິທີການຕິດຕໍ່ທີ່ຕ້ອງການຂອງຂ້ອຍແມ່ນ: ______________________________
Parent's/carer's preferred contact method

ລາຍລະອຽດການຕິດຕໍ່ຂອງຂ້ອຍແມ່ນ: ______________________________
Parent's/carer's contact details